# ຄວາມບາບຢູ່ໃນຄຣິດຕະຈັກ



ບົດຮຽນທີ 4 ສຳລັບສະບາໂຕທີ 25 ເດືອນກໍລະກົດ, 2026


"ພວກເຈົ້າບໍ່ຮູ້ບໍວ່າ ຮ່າງກາຍ
ຂອງພວກເຈົ້າເປັນວິຫານ
ຂອງພຣະວິນຍານບໍຣິສຸດເຈົ້າ
ອົງຊົງສະຖິດຢູ່ໃນພວກເຈົ້າ ຊຶ່ງ
ພວກເຈົ້າໄດ້ຮັບຈາກພຣະເຈົ້າ
ເຈົ້າທັງຫລາຍບໍ່ໄດ້ເປັນເຈົ້າຂອງ
ຕົວເຈົ້າເອງ"
(1 ກຣທ 6:19, 20)

ອຈ ໂປໂລໃຊ້ເວລາໃນ 1 ໂກຣິນໂທ ບົດທີ 5-7 ຂອງຈົດໝາຍສະບາບທຳອິດ ສົ່ງເຖິງຊາວໂກຣິນໂທ, ສ່ວນໃຫຍ່ແມ່ນພະຍາຍາມກຳຈັດຄວາມບາບທີ່ຝັງເລິກໃນຄຣິດຕະຈັກທີ່ເມືອງໂກຣິນໂທ, ນັ້ນກໍ່ຄື ການຜິດສິນທຳທາງເພດ.





ນອກຈາກຄວາມບາບນີ້ແລ້ວຍັງມີຄວາມບາບອື່ນໆເຊັ່ນ: ການກະທຳຜິດ ແລະ ການສໍ້ໂກງ ທີ່ກະທຳໃນໝູ່ພີ່ນ້ອງທີ່ມີຄວາມເຊື່ອ ເຊິ່ງຖືກນຳຂຶ້ນສູ່ສານ

ອຈ ໂປໂລ ໃຊ້ພາສາທີ່ຊັດເຈນ ແລະ ຕົງໄປຕົງມາ, ບໍ່ພຽງແຕ່ຊີ້ໃຫ້ເຫັນເຖິງຄວາມບາບເທົ່ານັ້ນ, ແຕ່ຍັງສະເໜີແນວທາງແກ້ໄຂໃຫ້ ເພື່ອກຳຈັດຄວາມບາບນັ້ນ ແລະ ປ້ອງກັນບໍ່ໃຫ້ຕົກຢູ່ໃນຄວາມບາບນັ້ນອີກ



| ຄວາມບາບໃນຄຣິດຕະຈັກ | ວິທີຫລີກລ້ຽງ |
| --- | --- |
| ບາບທີ່ແຜ່ຫລາຍໂດຍທົ່ວໄປ | ວິຫານແຫ່ງພຣະວິນຍານບໍຣິສຸດ |
| ການກຳຈັດຄວາມບາບ | ການມີເພດສຳພັນທີ່ຖືກຕ້ອງ |
| ການຈັດການກັບບັນຫາພາຍໃນ | |

# ຄວາມບາບ ໃນຄຣິດຕະຈັກ



# ບາບທີ່ແຜ່ຫລາຍໂດຍທົ່ວໄປ

"ແຕ່ເຖິງປານນັ້ນພວກເຈົ້າກໍ່ຍັງອວດຕົວຂຶ້ນ ແທນທີ່ຈະເປັນທຸກຮ້ອນໃຈ ແລະ ຄົນຢ່າງນັ້ນຄວນຖືກຂັບໄລ່ອອກຈາກພວກເຈົ້າໄປເສຍ?" (1 ກຣທ 5:2)

ໃນຄຣິດຕະຈັກໂກຣິນໂທ ມີ"ການຜິດສິນທຳທາງເພດອັນໜັກໜ່ວງ" ເຊິ່ງຄົນຕ່າງຊາດຍັງບໍ່ຍອມຮັບ" (1 ກຣທ 5:1).



ການມີຄວາມສຳພັນລະຫວ່າງພີ່ນ້ອງພາຍໃນສາຍເລືອດ ພາຍໃນຄຣິດຕະຈັກເປັນເລື່ອງທີ່ຮ້າຍແຮງຫລາຍ, ແຕ່ສະຖານະການຊ້ຳພັດຊົ່ວຮ້າຍລົງໄປຕື່ມອີກ, ເພາະແທນທີ່ຈະເກີດຄວາມລັງກຽດໃນທ່າມກາງສະມາຊິກ ແຕ່ພວກເຂົາຊ້ຳພັດພູມໃຈທີ່ຍອມຮັບເອົາຄວາມບາບນີ້ (1 ກຣທ 5:2 NIV).



ຄຣິດຕະຈັກສ່ວນໃຫຍ່ປະກອບດ້ວຍຄົນຕ່າງຊາດ, ຈິດສຳນຶກຂອງພວກເຂົາເອງບອກພວກເຂົາວ່າ ບໍ່ຄວນຍອມຮັບການຮ່ວມປະເວນີລະຫວ່າງຍາດພີ່ນ້ອງ, ຍິ່ງໄປກວ່ານັ້ນ ຄວາມຮູ້ກ່ຽວກັບພຣະຄຳພີຂອງພວກເຂົາກໍ່ຕອກຢ້ຳຄວາມຄິດນີ້ (ລບລວ 18:8).

ຖ້າວ່າພວກເຂົາຮູ້ຢ່າງຊັດເຈນແລ້ວວ່າ ການເຮັດແບບນີ້ແມ່ນຄວາມບາບ (1 ກຣທ 5:6)? ແລ້ວເປັນຫຍັງພວກເຂົາຈຶ່ງພູມໃຈ? ພວກເຂົາໄດ້ໂອ້ອວດວ່າຄຣິດຕະຈັກຂອງພວກເຂົານັ້ນຍອມຮັບຄວາມບາບຫລືບໍ່? ...?

# ການກຳຈັດຄວາມບາບ

“ສ່ວນຄົນພາຍນອກນັ້ນແມ່ນພຣະເຈົ້າຈະຕັດສິນລົງໂທດ, ຈົ່ງກຳຈັດຄົນຊົ່ວຊ້ານີ້ໃຫ້ອອກໄປຈາກພວກເຈົ້າເສຍ.” (1 ກຣທ 5:13)



ກໍລະນີການຮ່ວມປະເວນີລະຫວ່າງຍາດຕິພີ່ນ້ອງ “ກາຍເປັນທີ່ຮູ້ຈັກໄປທົ່ວແລ້ວ” (1 ກຣທ 5:1), ດັ່ງນັ້ນຕ້ອງມີການດຳເນີນການຢ່າງເລັ່ງດ່ວນ ເພື່ອປ້ອງກັນຄວາມເສຍຫາຍຕໍ່ຊື່ສຽງຂອງຄຣິດຕະຈັກ, ແລ້ວຄວນໃຊ້ມາດຕະການອັນໃດລະ?

ເພື່ອຕັດສິນວ່າຄົນນັ້ນ ມີຄວາມຜິດຫລືບໍ່? (1 ກຣທ 5:3)

→ ຢ່າຄົບຫາສະມາຄົມກັບຄົນບາບ, ຫລື ແມ້ແຕ່ຮ່ວມຮັບປະທານອາຫານກັບພວກເຂົາ, ຕາບໃດທີ່ພວກເຂົາຍັງຢືນຢັນທີ່ຈະເປັນສະມາຊິກຂອງຄຣິດຕະຈັກ ແລະ ແຕ່ບໍ່ຍອມລະຖິ້ມບາບຂອງຕົນເອງ (1 ກຣທ 5:11)

→ ເພື່ອຂັບໄລ່ຄົນບາບອອກໄປ ແລະ ມອບພວກເຂົາ ໃຫ້ແກ່ ຊາຕານ, ເພາະໂດຍການຖະໜຸຖະໜອມຄວາມບາບນີ້, ພວກເຂົາໄດ້ເລືອກທີ່ຈະຢູ່ພາຍໃຕ້ແອກຂອງຊາຕານໂດຍສະໝັກໃຈແລ້ວ (1 ກຣທ 5:2, 5, 13)





"ລະບຽບວິນັຍຂອງຄຣິສຕະຈັກ (ບໍ່ວ່າຄວາມຜິດບາບນັ້ນຈະຮ້າຍແຮງປານໃດກໍຕາມ) ຕ້ອງມີຈຸດປະສົງເພື່ອການໄຖ່ກູ້ສະເໝີ. ຄວາມຜິດຂອງບຸກຄົນນັ້ນຕ້ອງໄດ້ຮັບການຊີ້ແຈງໃຫ້ຈະແຈ້ງ ເພື່ອໃຫ້ເຂົາເຈົ້າສາມັກຮັບຮູ້, ກັບໃຈ, ແລະ 'ໄດ້ຮັບຄວາມພົ້ນໃນວັນຂອງອົງພຣະເຢຊູເຈົ້າ' (1 ໂກຣິນໂທ 5:5)."



# ການຈັດການກັບບັນຫາພາຍໃນ

"ຖ້າຜູ້ໃດໃນພວກເຈົ້າເປັນຄວາມກັນ, ຈະກ້າໄປສູ້ຄວາມກັນຕໍ່ໜ້າຄົນທີ່ບໍ່ເຊື່ອພຣະເຈົ້າ ແລະ ບໍ່ແມ່ນຕໍ່ໜ້າໄພ່ພົນຂອງພຣະເຈົ້າບໍ?"
(1 ກຣທ 6:1)



ຫລັງຈາກອະທິບາຍວິທີການແກ້ໄຂບາບໃນຄຣິດຕະຈັກແລ້ວ, ອຈ ໂປໂລ ຕຳໜິພວກເຂົາທີ່ບໍ່ປະຕິບັດຕາມແນວທາງທີ່ຖືກຕ້ອງ ແລະ ປ່ອຍໃຫ້ຂໍ້ພິພາກສາໄປຢູ່ກັບສານຝ່າຍໂລກໃຫ້ຕັດສິນ (1 ກຣທ 6:1-6). ແລະ ອຈ ໂປໂລລົງເລິກໄປກວ່ານັ້ນໂດຍໂຈມຕີຮາກເຫງົ້າຂອງບັນຫາ.

- ທຳອິດ, ບໍ່ຄວນມີຄວາມຂັດແຍ່ງກັນລະຫວ່າງສະມາຊິກໃນຄຣິດຕະຈັກ (1 ກຣທ. 6:7) ແລະແນ່ນອນວ່າ ສະມາຊິກບໍ່ຄວນເຮັດຜິດ ຫລື ສໍ້ໂກງກັນ(1 ກຣທ 6:8).



- ປະການທີສອງ ພີ່ນ້ອງຕ້ອງເຕັມໃຈທີ່ຈະໃຫ້ອະໄພໃນຄວາມຜິດພາດຂອງເຊິ່ງກັນແລະກັນ (1 ກຣທ 6:7).

- ປະການທີສາມ, ຖ້າຫາກບໍ່ສາມາດຕົກລົງກັນໄດ້ລະຫວ່າງສະມາຊິກກັນເອງ, ຄຣິດຕະຈັກຕ້ອງຕັດສິນ ຫລື ໄກ່ເກ່ຍລະຫວ່າງພວກເຂົາ (1 ກຣທ 6:2).

ເວັ້ນໄວ້ແຕ່ຈະເປັນເລື່ອງທາງອາຍາ (ໂຣມມັນ 13:1-5), ສຳລັບບັນຫາພາຍໃນຄຣິດຕະຈັກ ຄວນໄດ້ຮັບການແກ້ໄຂພາຍໃນຄຣິດຕະຈັກເອງ

“"ມັນເປັນໜ້າທີ່ຂອງພວກເຮົາທີ່ຈະຕ້ອງຮູ້ເຖິງຄວາມບົກຜ່ອງ ແລະ ຄວາມຜິດບາບພິເສດຂອງຕົນເອງ, ເຊິ່ງເປັນສາເຫດທີ່ເຮັດໃຫ້ເກີດຄວາມມືດມົນ, ຄວາມອ່ອນແອທາງຝ່າຍຈິດວິນຍານ, ແລະ ທຳລາຍຄວາມຮັກທຳອິດຂອງພວກເຮົາໃຫ້ມອດໄປ. ມັນແມ່ນຄວາມລຸ່ມຫຼົງໃນໂລກນີ້ບໍ? ມັນແມ່ນຄວາມເຫັນແກ່ຕົວບໍ? ມັນແມ່ນຄວາມຮັກໃນກຽດຕິຍົດຂອງຕົນເອງບໍ? ມັນແມ່ນການຂະຫັຍບຂະຫຍາຍເພື່ອທີ່ຈະເປັນທີ່ໜຶ່ງບໍ? ມັນແມ່ນບາບຂອງຕັນຫາລາຄະທີ່ກຳລັງກຳເຣີບຢ່າງຮຸນແຮງບໍ? ມັນແມ່ນບາບຂອງພວກທີ່ປຸ່ມພຣະຄຸນຂອງພຣະເຈົ້າໃຫ້ເປັນຄວາມມົວເມົາໃນການມະລົມບໍ? ຫຼື ມັນແມ່ນການໃຊ້ພຣະພອນ, ໂອກາດ, ແລະ ອຳນາດພິເສດອັນຍິ່ງໃຫຍ່ໃນທາງທີ່ຜິດ ແລະ ໃນທາງເສື່ອມ ເສຍ, ໂດຍການອວດອ້າງວ່າຕົນມີສະຕິປັນຍາ ແລະ ຄວາມຮູ້ທາງສາສະໜາ, ໃນຂະນະທີ່ຊີວິດ ແລະ ອຸປະນິໄສພັດບໍ່ສອດຄ່ອງ ແລະ ຂາດຈໍຣິຍະທຳ? ບໍ່ວ່າສິ່ງນັ້ນຈະແມ່ນຫຍັງກໍຕາມທີ່ຖືກເອົາອົກເອົາໃຈ ແລະ ຟູມຟັກມາຈົນກາຍເປັນສິ່ງທີ່ເຂັ້ມແຂງແລະ ຄອບງຳ, ຈົ່ງພະຍາຍາມຢ່າງເດັດດ່ຽວທີ່ຈະເອົາຊະນະມັນ, ບໍ່ດັ່ງນັ້ນທ່ານຈະຕ້ອງພິນາດ.".”

**EGW (Ye Shall Receive Power, December 18)**

# ວິທີຫລີກລ້ຽງ



# ວິຫານແຫ່ງພຣະວິນຍານບໍຣິສຸດ

"ພວກເຈົ້າບໍ່ຮູ້ບໍວ່າ ຮ່າງກາຍຂອງພວກເຈົ້າເປັນວິຫານຂອງພຣະວິນຍານບໍຣິສຸດເຈົ້າ ອົງຊົງສະຖິດຢູ່ໃນພວກເຈົ້າ ຊຶ່ງພວກເຈົ້າໄດ້ຮັບຈາກພຣະເຈົ້າ ເຈົ້າທັງຫລາຍບໍ່ໄດ້ເປັນເຈົ້າຂອງຕົວເຈົ້າເອງ"
(1 ກຣທ 6:19)



ຫລັງຈາກກ່າວເຖິງປະເດັນເລື່ອງການຟ້ອງຮ້ອງກັນເຖິງສານແລ້ວ, ອຈ ໂປໂລ ກໍ່ກັບມາສູ່ຫົວຂໍ້ຫລັກ ນັ້ນກໍ່ຄື ການຜິດສິນທຳທາງເພດໃນຄຣິດຕະຈັກ, ເປັນຫຍັງຈຶ່ງຜິດສິນທຳແບບນີ້?



ຄຣິດສຕຽນແມ່ນຖືກຊົງຮຽກເອີ້ນໃຫ້ມີຊີວິດທີ່ບໍຣິສຸດ (1 ກຣທ 6:11), ແລະ ຄວາມບໍຣິສຸດນີ້ຄວນຈະລວມເຖິງການລະຖິ້ມບາບທຸກຢ່າງ. ແຕ່ມີບາງຄົນໂຕ້ຖຽງວ່າ ບາບຂອງພວກເຂົາ ນັ້ນໄດ້ຮັບການອະໄພແລ້ວ ພວກເຂົາຈຶ່ງສາມາດທີ່ຈະເຮັດຫຍັງກໍ່ໄດ້ກັບຮ່າງກາຍຂອງພວກເຂົາຕາມໃຈ, ແຕ່ພຣະຄຳພີກ່າວວ່າ ຮ່າງກາຍບໍ່ໄດ້ມີໄວ້ສຳລັບການຜິດສິນທຳທາງເພດ" (1 ກຣທ 6:12-13).



ເຫດຜົນຂອງລາວກໍ່ຄື: ຮ່າງກາຍຂອງພວກເຮົາເປັນສ່ວນໜຶ່ງຂອງພຣະຄຣິດ ບໍ່ສາມາດນຳໄປຮວມກັບໂສເພນີ ຫລື ການລ່ວງປະເວນີໄດ້ (1 ກຣທ 6:15-18).

ສຸດທ້າຍແລ້ວ, ພວກເຮົາຕ້ອງໄດ້ຄຳນຶງເຖິງເລື່ອງນີ້ຢ່າງສຳຄັນ, ນັ້ນກໍ່ຄື: ຮ່າງກາຍເປັນພຣະວິຫານຂອງພຣະເຈົ້າ, ພຣະວິນຍານບໍຣິສຸດ. ດັ່ງນັ້ນຮ່າງກາຍຈຶ່ງບໍ່ແມ່ນຊັບສິນຂອງພວກເຮົາເອງ ແຕ່ເປັນຂອງພຣະເຈົ້າ. (1 ກຣທ 6:19). ພຣະເຈົ້າຊົງໄຖ່ພວກເຮົາດ້ວຍພຣະໂລຫິດຂອງພຣະບຸດຂອງພຣະອົງ, ດັ່ງນັ້ນພວກເຮົາຈຶ່ງຕ້ອງຖວາຍກຽດແດ່ພຣະເຈົ້າທັງໃນຮ່າງກາຍ ແລະ ຈິດວິນຍານຂອງພວກເຮົາ (1 ກຣທ 6:20).

# ການມີເພດສຳພັນທີ່ຖືກຕ້ອງ

"ແຕ່ເພື່ອປ້ອງກັນຄວາມຖືກຕ້ອງ ຊາຍທຸກຄົນຄວນມີເມຍເປັນຂອງຕົນ ແລະ ຍິງທຸກຄົນກໍ່ຄວນມີຜົວຂອງຕົນ." (1 ກຣທ 7:2)



ໂດຍການຕອບຄຳຖາມບາງຂໍ້ທີ່ຄຣິດຕະຈັກໃນໂກຣິນໂທນັ້ນໄດ້ຕັ້ງຂຶ້ນ, ອຈ ໂປໂລ ຊ່ວຍໃຫ້ພວກເຮົາເຂົ້າໃຈວ່າ ພວກເຮົາຄວນຈະຫລີກລ້ຽງການຜິດສິນທຳໄດ້ແນວໃດ(1 ກຣທ 7:1).

ໂດຍພື້ນຖານແລ້ວ; ຄົນທີ່ແຕ່ງງານແລ້ວ ຄວນມີເພດສຳພັນກັບຄູ່ຄອງທີ່ຖືກຕ້ອງຕາມກົດໝາຍກັບຄູ່ສົມຣົດຂອງຕົນເອງ. ສ່ວນຄົນທີ່ໂສດບໍ່ຄວນມີເພດສຳພັນກັບຄົນອື່ນ ຈົນກວ່າຈະແຕ່ງງານ

ຄູ່ສົມລົດບໍ່ຄວນປະຕິເສດການມີເພດສຳພັນ ເພາະຈະເປັນເຫດໃຫ້ອີກຝ່າຍ ນອກໃຈ(1 ກຣທ 7:3-5).



ຄົນໂສດສາມາດຮັບໃຊ້ພຣະເຈົ້າໄດ້ດີ ເພາະບໍ່ມີພາລະ ແລະ ຂໍ້ຈຳກັດໃນການຮັບໃຊ້ ແລະ ບໍ່ໄດ້ກັງວົນກັບພາລະຄອບຄົວຫລາຍ (1 ກຣທ 7:6-8, 32-34).

ຄົນໂສດທີ່ຍັງມີຄວາມປາຖະໜາຢູ່ ຄວນຫາທາງແຕ່ງງານໃນທາງທີ່ຖືກຕ້ອງ ເພື່ອຫລີກລ້ຽງການລໍ້ລວງນີ້ (1 ກຣທ 7:9).



“"ໃນການເຮັດວຽກເພື່ອຊ່ວຍເຫຼືອຜູ້ທີ່ຫຼົງຜິດ, ຈົ່ງໃຫ້ທຸກສາຍຕາຈ້ອງມອງໄປທີ່ພຣະຄຣິດ. [...] ຈົ່ງເວົ້າກັບຜູ້ທີ່ຫຼົງຜິດເຖິງຄວາມເມດຕາປານີ ແລະ ການອະໄພໂທດຂອງພຣະຜູ້ຊ່ວຍໃຫ້ພົ້ນ. ຈົ່ງໜູນໃຈຜູ້ກະທຳບາບໃຫ້ກັບໃຈ, ແລະເຊື່ອໃນພຣະອົງຜູ້ທີ່ສາມາດປະທານການອະໄພ. [...]
ຈົ່ງໃຫ້ຄຣິສຕະຈັກຮັບເອົາການກັບໃຈຂອງຜູ້ກະທຳບາບດ້ວຍຈິດໃຈທີ່ຮູ້ພຣະຄຸນ. ຈົ່ງນຳພາຜູ້ທີ່ກັບໃຈນັ້ນອອກມາຈາກຄວາມມືດມົນຂອງຄວາມບໍ່ເຊື່ອ ໄປສູ່ຄວາມສະຫວ່າງຂອງຄວາມເຊື່ອ ແລະ ຄວາມຊອບທຳ. ຈົ່ງວາງມືທີ່ສັ່ນເຊັ່ນຂອງລາວໄວ້ໃນພຣະຫັດອັນເຕັມໄປດ້ວຍຄວາມຮັກຂອງພຣະເຢຊູ. ການຍົກໂທດບາບເຊັ່ນນັ້ນຍອມໄດ້ຮັບການຍັ້ງຢືນໃນສະຫວັນ."

.

**EGW (The Desire of Ages, p. 806)**